ກະຊວງອຸດສາຫະກຳ ແລະ ການຄ້າ

ສະຖາບັນອຸດສາຫະກຳ ແລະ ການຄ້າ

ບົດຄົ້ນຄວ້າຫຍໍ້ດ້ານນະໂຍບາຍ

# ການນຳເຂົ້າເຄື່ອງອຸປະໂພກ-ບໍລິໂພກ ໃນສະພາບຫຍຸ້ງຍາກດ້ານເງິນຕາຕ່າງປະເທດ


## ສະຫຼຸບຫຍໍ້

ການນຳເຂົ້າສິນຄ້າອຸປະໂພກ-ບໍລິໂພກທີ່ພາຍໃນບໍ່ສາມາດສະໜອງໄດ້ຢ່າງພຽງພໍແມ່ນຍັງຖືວ່າມີຄວາມຈຳເປັນເພື່ອດັດສົມຕະຫຼາດ ແລະ ລາຄາສິນຄ້າຢູ່ຕະຫຼາດພາຍໃນປະເທດ. ຜົນການສຳຫຼວດບໍລິສັດນຳເຂົ້າເຄື່ອງອຸປະ ໂພກ-ບໍລິໂພກ ສະແດງໃຫ້ເຫັນວ່າເງິນຕາຕ່າງປະເທດທີ່ ນິຍົມໃຊ້ຫຼາຍໃນການນຳເຂົ້າເຄື່ອງອຸປະໂພກ-ບໍລິໂພກໃນປັດຈຸບັນຢູ່ລາວແມ່ນເງິນບາດ ແລະ ໂດລາອາເມລິກາ. ການແລກປ່ຽນເອົາສອງສະກຸນເງິນຕາຕ່າງປະເທດນີ້ມັກຈະຖືກແລກປ່ຽນໂດຍຜ່ານຮ້ານແລກປ່ຽນເງິນຕາຫຼາຍກວ່າຈະເປັນການແລກປ່ຽນຜ່ານທະນາຄານ. ໃນສະພາບການເງິນໃນປັດຈຸບັນຂອງປະເທດຫຼາຍບໍລິສັດທີ່ເຂົ້າຮ່ວມສຳຫຼວດແມ່ນບໍ່ສາມາດແລກປ່ຽນເງິນຕາຕ່າງປະເທດເພື່ອຊຳລະຄ່າສິນຄ້າໄດ້ຢ່າງພຽງພໍ ແລະ ຕ້ອງຫຼຸດປະລິມານນຳເຂົ້າແຕ່ 10% - 30% ແລະ ມີບາງບໍລິສັດກໍຂໍຕິດໜີ້ກັບຜູ້ສະໜອງຢູ່ຕ່າງປະເທດໃນໄລຍະ 3 ເດືອນ.

ຂໍ້ສະເໜີຫຼັກຂອງບໍລິສັດຕໍ່ລັດຖະບານແມ່ນຢາກໃຫ້ຊ່ວຍແກ້ໄຂບັນຫາການແລກປ່ຽນເງິນຕາຕ່າງປະເທດທີ່ເກີດຂຶ້ນໃນປັດຈຸບັນດ້ວຍການຄວບຄຸມອັດຕາແລກປ່ຽນໃຫ້ຄົງທີ່, ສາມາດແລກປ່ຽນໄດ້ກັບທະນາຄານຢ່າງສະດວກ ແລະ ຫຼຸດຄວາມແຕກຕ່າງລະຫວ່າງອັດຕາແລກປ່ຽນຢູ່ນອກ ແລະ ໃນທະນາຄານ.







29 ກໍລະກົດ 2022

# ການນຳເຂົ້າເຄື່ອງອຸປະໂພກ-ບໍລິໂພກ ໃນສະພາບຫຍຸ້ງຍາກດ້ານເງິນຕາຕ່າງປະເທດ

ໂດຍ ວຽງສະຫວ່າງ ທິບພະວົງ[1]
viengsavang@gmail.com

## ພາກສະເໜີ

ເຄື່ອງອຸປະໂພກ-ບໍລິໂພກຫຼາຍຊະນິດຍັງມີຄວາມຈຳເປັນ ແລະ ຂາດບໍ່ໄດ້ໃນການນຳເຂົ້າເພື່ອສະໜອງຄວາມຕ້ອງການພາຍໃນປະເທດ. ການນຳເຂົ້າເຄື່ອງອຸປະໂພກ-ບໍລິໂພກທີ່ພາຍໃນປະເທດບໍ່ສາມາດຜະລິດໄດ້ແມ່ນມີຄວາມສຳຄັນຕໍ່ການບໍລິໂພກ ແລະ ດຳລົງຊີວິດຂອງຄົນ ໂດຍສະເພາະໃນເຂດຕົວເມືອງໃຫຍ່. ເຄື່ອງນຳເຂົ້າປະເພດອາຫານສຳເລັດຮູບ ແລະ ເຄິ່ງສຳເລັດຮູບໄດ້ມີບົດບາດສຳຄັນໃນການດຳລົງຊີວິດຂອງຄົນໃນຍຸກປະຈຸບັນທີ່ຕ້ອງແຂ່ງຂັນກັບເວລາ; ນອກຈາກນັ້ນເຄື່ອງນຳເຂົ້າອຸປະໂພກ-ບໍລິໂພກຫຼາຍປະເພດຍັງກາຍເປັນສ່ວນປະກອບທີ່ສຳຄັນໃຫ້ກັບການສ້າງມູນຄ່າເພີ່ມຕໍ່ການຜະລິດ ແລະ ບໍລິການຂອງສັງຄົມ.

ອີງຕາມການສັງລວມສະຖິຕິການນຳເຂົ້າ ໃນປີ 2021 ຈາກກະຊວງອຸດສາຫະກຳ ແລະ ການຄ້າ ສະແດງໃຫ້ເຫັນວ່າການນຳເຂົ້າປະເພດເຄື່ອງດື່ມຊະນິດຕ່າງໆລວມເປັນມູນຄ່າ 241 ລ້ານໂດລາ, ຢາປົວພະຍາດ ແລະ ອຸປະກອນການແພດ 229 ລ້ານໂດລາ, ປະເພດອາຫານ 113 ລ້ານໂດລາ, ເຄື່ອງໃຊ້ໃນຫ້ອງນ້ຳ ແລະ ເຄື່ອງປຸງແຕ່ງອາຫານ ມີຄ່ານຳເຂົ້າ 21 ລ້ານໂດລາ ແລະ 7 ລ້ານໂດລາ ຕາມລຳດັບ.

ການສະໜອງສິນຄ້າອຸປະໂພກ-ບໍລິໂພກໃຫ້ກັບສັງຄົມໂດຍບໍລິສັດເອກະຊົນໄດ້ກາຍເປັນພາກສ່ວນສຳຄັນຂອງລະບົບເສດຖະກິດໃນປັດຈຸບັນທີ່ເຮັດໜ້າທີ່ນຳເຂົ້າສິນຄ້າທີ່ພາຍໃນບໍ່ທັນສາມາດຜະລິດ ຫຼື ບໍ່ທັນສະໜອງໄດ້ຢ່າງພຽງພໍໃນສັງຄົມ. ໃນໄລຍະຜ່ານມາສາມາດສັງເກດເຫັນໄດ້ວ່າບໍລິສັດນຳເຂົ້າສິນຄ້າຂອງເອກະຊົນພາຍໃນປະເທດໄດ້ເຮັດບົດບາດສຳຄັນເປັນຕົວຫຼັກໃນການຕິດຕໍ່ ແລະ ຊອກຫາບໍລິສັດຕ່າງປະເທດເພື່ອຈັດຊື້ໂດຍກົງກັບບໍລິສັດ/ຜູ້ສະໜອງຢູ່ຕ່າງປະເທດ.

ການນຳເຂົ້າສິນຄ້າຈາກຕ່າງປະເທດເພື່ອຈຳໜ່າຍພາຍໃນປະເທດແມ່ນຂະບວນການຊື້-ຂາຍທີ່ຕິດພັນກັບເງິນຕາຕ່າງປະເທດທີ່ໃຊ້ຊຳລະຄ່າສິນຄ້າດັ່ງກ່າວຂອງບໍລິສັດນຳເຂົ້າ ແລະ ຖ້າການແລກປ່ຽນເງິນຕາບໍ່ມີຄວາມສະດວກ ຫຼື ແລກປ່ຽນໄດ້ຍາກກໍຈະມີຜົນກະທົບຕໍ່ການນຳເຂົ້າສິນຄ້າອຸປະໂພກ-ບໍລິໂພກທີ່ຈຳເປັນຫຼາຍຊະນິດ; ດັ່ງນັ້ນເພື່ອເຂົ້າໃຈສະພາບການນຳເຂົ້າເຄື່ອງອຸປະໂພກ-ບໍລິໂພກຂອງບໍລິສັດໃນປັດຈຸບັນ ບົດຄົ້ນຄວ້ານີ້ໄດ້ນຳເອົາຜົນການເກັບກຳຂໍ້ມູນຢູ່ນະຄອນຫຼວງວຽງຈັນ ເພື່ອມາສະແດງ ແລະ ອະທິບາຍຕໍ່ສະພາບການທີ່ເກີດຂຶ້ນ ພ້ອມທັງຊອກຫາວິທີການແກ້ໄຂບັນຫາທີ່ເກີດຂຶ້ນ.

## ວິທີການສຶກສາ

ການສຶກສາໄດ້ເຮັດໃນຮູບແບບການອະທິບາຍສະພາບການຕົວຈິງທີ່ເກີດຂຶ້ນ ບວກກັບຂໍ້ມູນທີ່ເກັບກຳຈາກບໍລິສັດນຳເຂົ້າເຄື່ອງອຸປະໂພກ-ບໍລິໂພກຢູ່ນະຄອນຫຼວງວຽງຈັນ ລະຫວ່າງວັນທີ 12-22 ກໍລະກົດ 2022. ການເກັບກຳຂໍ້ມູນແມ່ນນຳໃຊ້ແບບຟອມອອນລາຍສົ່ງໃຫ້ບັນດາບໍລິສັດນຳເຂົ້າສິນຄ້າຢູ່ນະຄອນຫຼວງວຽງຈັນ

[1] ຮອງຫົວໜ້າສະຖາບັນອຸດສາຫະກຳ ແລະ ການຄ້າ
(ຄະນະຊ່ວຍວຽກຄົ້ນຄວ້າ: ນ. ພີລາວັນ ພີລາທ່ອງ, ທ.ສັນຕິສຸກ ສີສົມບັດ ແລະ ທ. ຈັນທະພອນ ສີລິປັນໂຍ)

ຈຳນວນ 13 ບໍລິສັດ (ລາຍຊື່ລະອຽດຢູ່ເອກະສານຊ້ອນທ້າຍ) ທີ່ນອນໃນລາຍຊື່ບໍລິສັດນຳເຂົ້າສິນຄ້າ 59 ບໍລິສັດຈາກການສັງລວມຂອງພະແນກອຸດສາຫະກຳ ແລະ ການຄ້ານະຄອນຫຼວງວຽງຈັນ.

ຜູ້ເຂົ້າຮ່ວມຕອບແບບສອບຖາມ 62% ແມ່ນອຳນວຍການບໍລິສັດ, 23% ແມ່ນພະນັກງານບັນຊີ ແລະ 15% ແມ່ນພະນັກງານຝ່າຍບໍລິຫານ ທີ່ໄດ້ຕອບແບບສອບຖາມອອນລາຍໃນຄັ້ງນີ້ (ເບິ່ງເອກະສານຄັດຕິດ).

## ເງິນຕາຕ່າງປະເທດທີ່ໃຊ້ເພື່ອນຳເຂົ້າສິນຄ້າ

ຮູບສະແດງ 1 ໃນຈຳນວນບໍລິສັດນຳເຂົ້າທີ່ໄດ້ຕອບແບບສອບ ຖາມ 77% ຕອບວ່າໄດ້ໃຊ້ເງິນບາດນຳເຂົ້າສິນຄ້າ ແລະ 23% ແມ່ນໃຊ້ເງິນໂດລາອາເມລິກາ.

ຮູບ 1.




ການນຳໃຊ້ເງິນຢວນ (ຈີນ) ແລະ ດົງ (ຫວຽດນາມ) ເພື່ອນຳເຂົ້າເຄື່ອງອຸປະໂພກບໍລິໂພກຖືວ່າຍັງມີໜ້ອຍລະຫວ່າງຈຳນວນບໍລິສັດທີ່ເຂົ້າຮ່ວມສຳຫຼວດທັງໝົດ ໂດຍ ມີພຽງ 15% ແລະ 23% ຕາມລຳດັບ.

## ການຊຳລະເງິນຕໍ່ສິນຄ້ານຳເຂົ້າ

ການຊຳລະເງິນຄ່າສິນຄ້າໃຫ້ກັບບໍລິສັດຕ່າງປະເທດ ຮູບ 2 ສະແດງໃຫ້ເຫັນວ່າສ່ວນໃຫຍ່ບໍລິສັດທີ່ເຂົ້າຮ່ວມເກັບກຳຂໍ້ມູນ 46% ແມ່ນສາມາດຊຳລະຄ່າເຄື່ອງພາຍຫຼັງສິນຄ້າມາເຖິງບໍລິສັດແລ້ວ, 39% ແມ່ນຕ້ອງຈ່າຍຄ່າເຄື່ອງກ່ອນໄດ້ຮັບສິນຄ້າ ແລະ 15% ແມ່ນສາມາດຕິດໜີ້ບໍລິສັດຕ່າງປະເທດໃນໄລຍະບໍ່ເກີນສາມເດືອນ.

ຮູບ 2.




## ການແລກປ່ຽນເງິນຕາຕ່າງປະເທດ

ຮ້ານແລກປ່ຽນເງິນຕາຕ່າງປະເທດແມ່ນສະຖານທີ່ແລກປ່ຽນເງິນຕາຕ່າງປະເທດທີ່ບໍລິສັດນຳເຂົ້າສິນຄ້າມັກໃຊ້ບໍລິການຫຼາຍທີ່ສຸດ ເພາະມີຂັ້ນຕອນທີ່ສະດວກ ແລະ ງ່າຍກວ່າການແລກປ່ຽນໂດຍຜ່ານທະນາຄານ. ຮູບ 3 ສະແດງອັດຕາສ່ວນການແລກປ່ຽນຜ່ານຮ້ານແລກປ່ຽນເງິນຕາຂອງບໍລິສັດນຳເຂົ້າໃນການເກັບຂໍ້ມູນຄັ້ງນີ້ມີເຖິງ 92%; ຜ່ານທະນາຄານ ແລະ ສະຖາບັນການເງິນຈຸລະພາກແມ່ນມີໜ້ອຍປະມານ 8%.

ຮູບ 3.




ເຫດຜົນທີ່ບໍລິສັດໄດ້ຕອບໃນແບບສອບຖາມສາເຫດທີ່ບໍ່ໄດ້ແລກປ່ຽນເງິນຕາຕ່າງປະເທດກັບທະນາຄານທຸລະກິດແມ່ນຍ້ອນຂະບວນການແລກປ່ຽນແມ່ນມີຄວາມຫຍຸ້ງຍາກ ແລະ ບາງຄັ້ງກໍຖືກປະຕິເສດໃນການແລກປ່ຽນເງິນຕາຕ່າງປະເທດ.

## ການປັບຕົວໃນສະພາບການແລກປ່ຽນເງິນຕາຕ່າງປະເທດໄດ້ຍາກ

ຈາກສະພາບການຫຍຸ້ງຍາກໃນການແລກປ່ຽນເງິນຕາຕ່າງປະເທດທີ່ຍັງບໍ່ທັນສະດວກດີເທົ່າທີ່ຄວນໃນໄລຍະປັດຈຸບັນ ບໍລິສັດນຳເຂົ້າເຄື່ອງອຸປະໂພກ-ບໍລິໂພກທີ່ໄດ້ຕອບແບບສອບຖາມ ມີ 9 ຫົວໜ່ວຍ (69%) ແຈ້ງໃຫ້ຮູ້ວ່າບໍລິສັດໄດ້ຫຼຸດປະລິມານການນຳເຂົ້າລົງ ແລະ 4 ບໍລິສັດ (31%) ໄດ້ຊື້ຕິດໜີ້ກັບຜູ້ຂາຍຢູ່ຕ່າງປະເທດ (ຮູບ 4).

ຮູບ 4.




ການຫຼຸດປະລິມານນຳເຂົ້າຂອງບໍລິສັດໃນຊ່ວງເວລານີ້ແມ່ນເລີ່ມແຕ່ 10% ຈົນຮອດ 30% ຂອງປະລິມານນຳເຂົ້າທຽບກັບຊ່ວງດຽວກັນຂອງປີຜ່ານມາ.

## ຄຳຄິດເຫັນຈາກບໍລິສັດນຳເຂົ້າສິນຄ້າ

ໃນສະພາບການທີ່ການປ່ຽນແປງດ້ານອັດຕາແລກປ່ຽນລະຫວ່າງເງິນກີບ ກັບ ເງິນຕາຕ່າງປະເທດແຕກໂຕນກັນຫຼາຍສົມຄວນລະຫວ່າງອັດຕາແລກປ່ຽນທີ່ກຳນົດໂດຍທະນາຄານແຫ່ງ ສປປ ລາວ ແລະ ຮ້ານແລກປ່ຽນທົ່ວໄປບວກກັບການຊື້ເງິນຕາຕ່າງປະເທດທີ່ຍາກຫຼາຍຂຶ້ນຂອງບໍລິສັດນຳເຂົ້າເຄື່ອງອຸປະໂພກ-ບໍລິໂພກ ຈຶ່ງເຮັດໃຫ້ຫຼາຍບໍລິສັດຕ້ອງຫຼຸດການນຳເຂົ້າສິນຄ້າລົງໃນໄລຍະປັດຈຸບັນ.

ການນຳເຂົ້າເຄື່ອງອຸປະໂພກ-ບໍລິໂພກທີ່ພາຍໃນບໍ່ສາມາດສະໜອງໄດ້ ຫຼື ສະໜອງໄດ້ບໍ່ພຽງພໍ ແມ່ນຍັງຈຳເປັນເພື່ອຮັບໃຊ້ໃນດຳລົງຊີວິດຂອງຄົນໃນສັງຄົມ. ດັ່ງນັ້ນການສາມາດແລກປ່ຽນເງິນຕາຕ່າງປະເທດທີ່ສະດວກ ແລະພຽງພໍຂອງບໍລິສັດນຳເຂົ້າ ຈຶ່ງມີຄວາມສຳຄັນໃນການຮັກສາຄວາມສົມດູນຂອງຕະຫຼາດ ກໍຄືການເຮັດໃຫ້ລາຄາສິນຄ້າມີຄວາມໝັ້ນທ່ຽງ ພາຍໃຕ້ການດັດສົມຂອງອຸປະທານ ແລະ ອຸປະສົງຂອງຕະຫຼາດ.

ໃນການສຳຫຼວດ ບໍລິສັດນຳເຂົ້າໄດ້ຍົກໃຫ້ພາກລັດຊ່ວຍແກ້ໄຂໃນສາມຈຸດໃຫຍ່ ຄື: ອຳນວຍຄວາມສະດວກໃຫ້ບໍລິສັດນຳເຂົ້າສາມາດແລກປ່ຽນເງິນຕາຕ່າງປະເທດໄດ້ກັບທະນາຄານຕາມລະບຽບການທີ່ກຳນົດໄວ້, ມີມາດຕະການຄຸ້ມຄອງອັດຕາແລກປ່ຽນໃນແຕ່ລະໄລຍະຢ່າງໝັ້ນທ່ຽງ ແລະ ເຮັດໃຫ້ຄວາມແຕກຕ່າງລະຫວ່າງອັດຕາແລກປ່ຽນຂອງທະນາຄານກາງ ແລະ ຮ້ານແລກປ່ຽນມີຄວາມໃກ້ຄຽງກັນ (ຮູບ 5).

ຮູບ 5.




## ສະຫຼຸບລວມ

ການນຳເຂົ້າສິນຄ້າອຸປະໂພກ-ບໍລິໂພກທີ່ພາຍໃນບໍ່ສາມາດສະໜອງໄດ້ຢ່າງພຽງພໍແມ່ນຖືວ່າຈຳເປັນ ແລະມີຄວາມສຳຄັນໃນການຄຸ້ມຄອງສິນຄ້າ ແລະ ລາຄາໃນຕະຫຼາດພາຍໃນປະເທດ. ການບໍ່ສາມາດສະໜອງສິນຄ້າໃດໜຶ່ງທີ່ພາຍໃນປະເທດບໍ່ສາມາດຜະລິດໄດ້ກໍອາດເຮັດໃຫ້ລາຄາສິນຄ້າຂອງຜະລິດຕະພັນນັ້ນສູງຂຶ້ນຍ້ອນຄວາມບໍ່ສົມດູນຂອງຄວາມຕ້ອງການ ແລະ ການສະໜອງ. ອີງຕາມການລາຍງານດັດຊະນີລາຄາການຊົມໃຊ້ (CPI) ຂອງ ສປປ ລາວ ປະຈຳເດືອນ 6/2022 ທຽບກັບເດືອນ 5/2022 ສະແດງໃຫ້ເຫັນວ່າ ໝວດອາຫານ ແລະ

ເຄື່ອງດື່ມບໍ່ແມ່ນທາດເຫຼົ້າ ມີລາຄາເພີ່ມຂຶ້ນ 8,6%, ລາຄາໝວດເຄື່ອງໃຊ້ໃນເຮືອນ ເພີ່ມຂຶ້ນ 12% ແລະ ລາຄາໝວດຮັກສາສຸຂະພາບ ແລະຢາ ເພີ່ມຂຶ້ນ 13,1%.

ໂດຍອີງຕາມຜົນການສໍາຫຼວດສະແດງໃຫ້ເຫັນວ່າເງິນຕາຕ່າງປະເທດທີ່ນິຍົມໃຊ້ຫຼາຍໃນການນໍາເຂົ້າເຄື່ອງອຸປະໂພກ-ບໍລິໂພກໃນປັດຈຸບັນຂອງບໍລິສັດນໍາເຂົ້າຢູ່ລາວແມ່ນເງິນບາດ ແລະ ໂດລາອາເມລິກາ. ການແລກປ່ຽນເອົາສອງສະກຸນ ເງິນຕາຕ່າງປະເທດນີ້ມັກຈະຖືກແລກປ່ຽນໂດຍຜ່ານຮ້ານແລກປ່ຽນເງິນຕາຫຼາຍກວ່າຈະເປັນການແລກປ່ຽນຜ່ານທະນາຄານ. ໃນສະພາບການເງິນປັດຈຸບັນ ຫຼາຍບໍລິສັດທີ່ເຂົ້າຮ່ວມສໍາຫຼວດແຈ້ງວ່າບໍ່ສາມາດແລກປ່ຽນເງິນຕາເພື່ອຊໍາລະຄ່າສິນຄ້າຢ່າງພຽງພໍຈຶ່ງເຮັດໃຫ້ບໍລິສັດຕ້ອງຫຼຸດປະລິມານນໍາເຂົ້າແຕ່ 10% - 30% ໃນໄລຍະຜ່ານມາ ແລະ ມີບາງບໍລິສັດກໍຂໍຕິດໜີ້ກັບຜູ້ສະໜອງຢູ່ຕ່າງປະເທດໃນໄລຍະ 3 ເດືອນ. ຢ່າງໃດກໍດີ ບໍລິສັດສ່ວນໃຫຍ່ທີ່ໄດ້ຕອບແບບສອບແຈ້ງວ່າຜູ້ສະໜອງຢູ່ຕ່າງປະເທດມັກຈະໃຫ້ຈ່າຍເງິນກ່ອນ ຫຼື ຊໍາລະຄ່າສິນຄ້າພາຍຫຼັງເຄື່ອງມາຮອດສາງຂອງບໍລິສັດ.

ຈາກສະພາບດັ່ງກ່າວບໍລິສັດນໍາເຂົ້າຂໍສະເໜີລັດຖະບານໃຫ້ຊ່ວຍແກ້ໄຂບັນຫາການແລກປ່ຽນເງິນຕາຕ່າງປະເທດທີ່ເກີດຂຶ້ນໃນປັດຈຸບັນດ້ວຍການຄວບຄຸມອັດຕາແລກປ່ຽນໃຫ້ຄົງທີ່, ສາມາດແລກປ່ຽນໄດ້ກັບທະນາຄານຢ່າງສະດວກ ແລະ ເຮັດໃຫ້ຄວາມແຕກຕ່າງລະຫວ່າງອັດຕາແລກປ່ຽນຂອງຮ້ານແລກປ່ຽນ ແລະທະນາຄານຫຼຸດໜ້ອຍລົງ ໂດຍສະເພາະກໍແມ່ນການປະຕິບັດຕາມຂໍ້ຕົກລົງເລກທີ 449/ທຫລ (2022) ຂອງທະນາຄານແຫ່ງ ສປປ ລາວ ວ່າດ້ວຍການບໍລິການແລກປ່ຽນເງິນຕາຂອງທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາຕົວແທນ.

**ເອກະສານອ້າງອີງ**

ກົມການນໍາເຂົ້າ ແລະ ສົ່ງອອກ (2022), ສະຖິຕິການນໍາເຂົ້າ-ສົ່ງອອກ 2021, ກະຊວງອຸດສາຫະກໍາ ແລະ ການຄ້າ

ສູນສະຖິຕິແຫ່ງຊາດ (2022), ດັດຊະນີລາຄາການຊົມໃຊ້ ແລະ ອັດຕາເງິນເຟີ້ ຂອງ ສປປ ລາວ ປະຈໍາເດືອນ ມິຖຸນາ 2022, ກະຊວງແຜນການ ແລະ ການລົງທຶນ